Updated 5/13/2020
AAPIERN.ORG

# NCAPA COVID-19 Resource:
# ການຈ່າຍເງິນສຳລັບຜົນກະທົບທາງເສດຖະກິດ

ໃນສ່ວນຫນຶ່ງຂອງກົດຫມາຍທີ່ຊື່ວ່າ CARES ຊຶ່ງໄດ້ຜ່ານລັດຖະສະພາ ແລະໄດ້ຖືກເຊັນຊື່ໃຫ້ເປັນບັນຍັດແລ້ວໃນວັນທີ 27 ມີນາ 2020, ລັດຖະບານກາງຈະມອບເງິນສົດຊ່ວຍເຫຼືອໃຫ້ແກ່ບຸກຄົນ ແລະຄອບຄົວຕ່າງໆ, ຊຶ່ງກົມສ່ວຍສາອາກອນ (IRS) ຈະເປັນຜູ້ອອກເງິນໃຫ້. ເງິນດັ່ງກ່າວບໍ່ຈຳເປັນຕ້ອງໄຊ້ຄືນ .[1]

## ຈຳນວນເງິນທີ່ຈະຈ່າຍໃຫ້ [2]:

- ສູງເຖິງ $1,200 ສຳລັບບຸກຄົນ ຫຼື $2,400 ສຳລັບຄູ່ຜົວເມັຍ; $500 ສຳລັບລູກແຕ່ລະຄົນທີ່ມີສິດ.
- ເງິນຈຳນວນເຕັມສຳລັບຜູ້ເສັຍພາສີທີ່ມີລາຍໄດ້ຮວມຫລັງຈາກຫັກທຸກຢ່າງສູງເຖິງ $75,000 ສຳລັບບຸກຄົນ ແລະສູງເຖິງ $150,000 ສຳລັບຄູ່ຜົວເມັຍທີ່ຍື່ນເສັຍພາສີຮ່ວມກັນ. ການຈ່າຍເງິນຈະລົດລົງ $5 ສຳລັບເງິນທຸກ $100 ທີ່ເກີນກວ່າ $75,000\$150,000 ຄອບຄົວ.

## ການມີສິດ:

- ຈະຕ້ອງໄດ້ຍື່ນເສັຍພາສີລາຍໄດ້ໃນປີ 2018 ຫຼື 2019. ຜູ້ໄດ້ຮັບເງິນປະກັນສັງຄົມ (SSI) ຫຼື ຜູ້ກິນເງິນບຳນານລົດໄຟ ທີ່ບໍ່ຈຳເປັນຕ້ອງໄດ້ຍື່ນເສັຍພາສີລາຍໄດ້ ກໍຍັງມີສິດ ແລະບໍ່ຈຳເປັນໃຫ້ຍື່ນເສັຍພາສີລາຍໄດ້.
- ແຕ່ລະຄົນທີ່ມີຊື່ຢູ່ໃນການເສັຍພາສີລາຍໄດ້ນັ້ນຈະຕ້ອງຍື່ນໄປພ້ອມກັບເລກປະກັນສັງຄົມ (ເບີໂຊໂຊ່) [3]. ຖ້າຜູ້ໃດທີ່ມີຊື່ໃນການເສັຍພາສີລາຍໄດ້ນັ້ນໃຊ້ເລກປະຈຳຕົວຜູ້ເສັຍພາສີ (ITIN), ຜູ້ນັ້ນພ້ອມທັງຄູ່ສົມລົດຈະບໍ່ໄດ້ຮັບເງິນສ່ວນນີ້.
- ຜູ້ເສັຍພາສີທີ່ເປັນໂສດທີ່ມີລາຍໄດ້ເກີນກວ່າ $99,000 ແລະ $198,000 ສຳລັບຜູ້ເສັຍພາສີຮ່ວມກັນຊຶ່ງບໍ່ມີລູກຈະບໍ່ມີສິດໄດ້ຮັບເງິນ.
- ບຸກຄົນທີ່ຖືກອ້າງເປັນຜູ້ຖືກອຸປະຖຳຂອງຄົນອື່ນກໍບໍ່ມີສິດ

## ຂັ້ນຕອນຕໍ່ໄປ:

- ໃຫ້ກວດສອບສະຖານະການຮັບເງິນຂອງທ່ານ: https://www.irs.gov/coronavirus/get-my-payment
- ບໍ່ໄດ້ຍື່ນເສັຍພາສີລາຍໄດ້? ສົ່ງຂໍ້ມູນເຂົ້າໃນນີ້:

  https://www.irs.gov/coronavirus/non-filers-enter-payment-info-here

- ເງິນທີ່ຈ່າຍໃຫ້ນີ້ຈະສົ່ງໃຫ້ໂດຍອັຕະໂນມັດ---ໂດຍກົມສ່ວຍສາອາກອນ---ໃຫ້ແກ່ຄົນອະເມຣິກັນສ່ວນຫລາຍທີ່ໄດ້ຍື່ນເສັຍພາສີລາຍໄດ້. ໃນເວລາໃດທີ່ເປັນໄປໄດ້, ການໂອນເງິນເຂົ້າບັນຊີໂດຍກົງຈະຖືກນຳມາໃຊ້ແທນການສົ່ງເປັນແຊັກເງິນສົດ.
- ***ໃຫ້ລະວັງການສໍ້ໂກງ!*** *ຖ້າຫາກທ່ານມີສິດ ແລະຍື່ນເສັຍພາສີລາຍໄດ້ແລ້ວ, ທ່ານບໍ່ຈຳເປັນຕ້ອງເຮັດຫຍັງເລີຍ.*

COVID-19 TASKFORCE

Source:
[1] https://www.speaker.gov/sites/speaker.house.gov/files/CARES%20Act%20Rebates%20FAQ_0%20.pdf
[2] https://www.irs.gov/newsroom/economic-impact-payments-what-you-need-to-know
[3] https://www.heartlandalliance.org/wp-content/uploads/2020/04/COVID19_Factsheet_Cash_Payments_.pdf